ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ

ເລກທີ 003 /ຄລທ

ນະຄອນຫຼວງວຽງຈັນ, ວັນທີ 06 ມິຖຸນາ 2022

# ຂໍ້ຕົກລົງ
# ວ່າດ້ວຍການແບ່ງຄວາມຮັບຜິດຊອບໃຫ້ຂັ້ນທ້ອງຖິ່ນ ໃນການພິຈາລະນາອະນຸຍາດການສຶກສາສຳຫຼວດເນື້ອທີ່ດິນ ເພື່ອລົງທຶນສຳປະທານດ້ານການຜະລິດກະສິກຳ-ປ່າໄມ້ ແລະ ການບໍລິການ

- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018;
- ອີງຕາມ ຜົນຂອງກອງປະຊຸມຄົບຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ຮ່ວມກັບຂັ້ນແຂວງ ຄັ້ງວັນທີ 05 ກໍລະກົດ 2021.

## ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ
## ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍກົດໝາຍ ແລະ ຈັດຕັ້ງປະຕິບັດຕາມມະຕິກອງປະຊຸມຄົບຄະນະ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ຮ່ວມກັບຂັ້ນແຂວງ ຄັ້ງວັນທີ 05 ກໍລະກົດ 2021 ວ່າດ້ວຍການແບ່ງຄວາມຮັບຜິດຊອບໃຫ້ຂັ້ນທ້ອງຖິ່ນ ໃນການພິຈາລະນາອະນຸຍາດ, ການຄຸ້ມຄອງ ແລະ ຕິດຕາມ ກວດກາ ໃນການສຶກສາຄວາມເປັນໄປໄດ້ການລົງທຶນສຳປະທານ ດ້ານການຜະລິດກະສິກຳ-ປ່າໄມ້ ແລະ ການບໍລິການ ໂດຍກຳນົດຂອບເຂດສິດ, ຂັ້ນຕອນ ແລະ ເງື່ອນໄຂໃນການພິຈາລະນາອະນຸຍາດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ, ຫຼຸດຜ່ອນບັນດາຂອດຂັ້ນໃນການຄົ້ນຄວ້າການພິຈາລະນາຂອງຂະແໜງການພາກລັດຢູ່ຂັ້ນສູນກາງ ເຮັດໃຫ້ກົນໄກການພິຈາລະນາອະນຸຍາດການລົງທຶນ ມີຄວາມເປັນເອກະພາບ, ວ່ອງໄວ, ໂປ່ງໃສ ແລະ ມີປະສິດທິພາບ.

### ມາດຕາ 2 ຄວາມຮັບຜິດຊອບຂອງຂັ້ນທ້ອງຖິ່ນ

ຄວາມຮັບຜິດຊອບຂອງຂັ້ນທ້ອງຖິ່ນໃນການພິຈາລະນາອະນຸຍາດການສຶກສາສຳຫຼວດເນື້ອທີ່ດິນເພື່ອລົງທຶນສຳປະທານດ້ານການຜະລິດກະສິກຳ-ປ່າໄມ້ ແລະ ການບໍລິການ ໝາຍເຖິງ ການສຶກສາສຳຫຼວດເນື້ອທີ່ດິນ

ເພື່ອລົງທຶນໃນວຽກດັ່ງກ່າວ ຢູ່ພາຍໃນທ້ອງຖິ່ນຂອງຕົນ ມອບໃຫ້ອົງການປົກຄອງຂັ້ນແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາອະນຸຍາດ ແລະ ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບຜູ້ລົງທຶນ.

## ໝວດທີ 2
## ການພິຈາລະນາອະນຸຍາດສຶກສາສຳຫຼວດເນື້ອທີ່ດິນ ເພື່ອລົງທຶນສຳປະທານດ້ານການຜະລິດກະສິກຳ-ປ່າໄມ້ ແລະ ການບໍລິການ

**ມາດຕາ 3 ຂອບເຂດສິດພິຈາລະນາອະນຸຍາດ ຂອງ ຄລທ ຂັ້ນແຂວງ, ນະຄອນຫຼວງ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ, ນະຄອນຫຼວງ ສາມາດພິຈາລະນາອະນຸຍາດ ໃຫ້ສຶກສາ, ສຳຫຼວດ ເນື້ອທີ່ດິນ ເພື່ອລົງທຶນດ້ານການຜະລິດກະສິກຳ-ປ່າໄມ້ ແລະ ການບໍລິການ ທີ່ນອນໃນ ທ້ອງຖິ່ນຂອງຕົນ.

**ມາດຕາ 4 ຂັ້ນຕອນການຄົ້ນຄວ້າພິຈາລະນາອະນຸຍາດ**

- ຜູ້ລົງທຶນ ປະກອບເອກະສານຕາມແບບຟອມຄຳຮ້ອງຂໍລົງທຶນຄົບຖ້ວນ ຍື່ນຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ;
- ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງສົ່ງເອກະສານຄຳຮ້ອງຂໍຄຳເຫັນນຳຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ພາຍໃນ 2 (ສອງ) ວັນລັດຖະການ ເພື່ອຄົ້ນຄ້ວາ ແລະ ມີຄຳເຫັນແຈ້ງຕອບເປັນລາຍລັກອັກສອນຄືນ ພາຍໃນເວລາ 15 (ສິບຫ້າ) ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ ຖ້າບໍ່ມີຄຳຕອບພາຍໃນເວລາດັ່ງກ່າວຖືວ່າເປັນການເຫັນດີ;
- ພາຍຫຼັງມີຄຳເຫັນດີຈາກຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ຄົ້ນຄ້ວາ ນຳສະເໜີກອງປະຊຸມ ຄລທ.ຂ ພິຈາລະນາຕົກລົງດ້ານຫຼັກການ ພາຍໃນເວລາ 10 (ສິບ) ວັນລັດຖະການ. ໃນກໍລະນີຄຳເຫັນຂອງຂະແໜງການ ແລະ ທ້ອງຖິ່ນ ມີຄວາມເປັນເອກະພາບ ຫ້ອງການບໍລິການ ການລົງທຶນປະຕູດຽວ ເຮັດລາຍງານຂໍການອະນຸຍາດ ຫຼື ປະຕິເສດຈາກປະທານ ຄລທ.ຂ ໂດຍກົງ;
- ພາຍຫຼັງກອງປະຊຸມ ຄລທ.ຂ ຫຼື ປະທານ ຄລທ.ຂ ໄດ້ຕົກລົງເຫັນດີແລ້ວ ຫ້ອງການບໍລິການ ການລົງທຶນປະຕູດຽວ ຕ້ອງແຈ້ງໃຫ້ຜູ້ລົງທຶນຊາບ ແລະ ເຊີນເຂົ້າມາເຈລະຈາບົດບັນທຶກຄວາມເຂົ້າໃຈ (MOU) ພາຍໃນກຳນົດເວລາ 10 (ສິບ) ວັນລັດຖະການ ໂດຍມີສ່ວນຮ່ວມຂອງຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານຂໍການມອບສິດຈາກປະທານ ຄລທ.ຂ ເພື່ອເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບຜູ້ລົງທຶນ ໃນໂຄງການດັ່ງກ່າວ;
- ຫຼັງຈາກເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາແລ້ວ ຜູ້ລົງທຶນ ຕ້ອງວາງເງິນຄ້ຳປະກັນ ຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ແລະ ດຳເນີນການເກັບຂໍ້ມູນ, ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ຜົນກະທົບດ້ານສິ່ງແວດລ້ອມ ຕາມລະບຽບການ.

**ມາດຕາ 5 ເງື່ອນໄຂການພິຈາລະນາອະນຸຍາດ**

- ການສຳປະທານທີ່ດິນ 150 (ໜຶ່ງຮ້ອຍຫ້າສິບ) ເຮັກຕາ ລົງມາ ທີ່ນອນໃນທ້ອງຖິ່ນຂອງຕົນ ແມ່ນໃຫ້ພະແນກແຜນການ ແລະ ການລົງທຶນ ຄົ້ນຄວ້າສົມທົບກັບພະແນກການ ແລະ ທ້ອງຖິ່ນກ່ຽວຂ້ອງ ນຳສະເໜີກອງປະຊຸມ ຄລທ.ຂ ພິຈາລະນາຕົກລົງ ແລະ ເຊັນເປັນຄູ່ສັນຍາ ຕາງໜ້າອົງການປົກຄອງແຂວງ, ນະຄອນຫຼວງ ຕາມການມອບສິດຈາກທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;

- ການສຶກສາສຳຫຼວດເນື້ອທີ່ດິນ ໃນທ້ອງຖິ່ນຂອງຕົນ ເພື່ອລົງທຶນດ້ານການຜະລິດກະສິກຳ-ປ່າໄມ້ ແລະ ການບໍລິການ ແມ່ນໃຫ້ພະແນກແຜນການ ແລະ ການລົງທຶນ ຄົ້ນຄວ້າ ໂດຍມີຄຳເຫັນດີຈາກພະແນກການ ແລະ ທ້ອງຖິ່ນກ່ຽວຂ້ອງ ນຳສະເໜີກອງປະຊຸມ ຄລທ.ຂ ພິຈາລະນາຕົກລົງ ແລະ ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຕາງໜ້າອົງການປົກຄອງແຂວງ, ນະຄອນຫຼວງ ຕາມການມອບສິດຈາກທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

**ມາດຕາ 6 ການຮັບຮອງຜົນການສຶກສາສຳຫຼວດ**

- ໂຄງການທີ່ຢູ່ໃນຂອບເຂດສິດການອະນຸຍາດຂອງຂັ້ນແຂວງ, ນະຄອນຫຼວງ ແມ່ນໃຫ້ພະແນກການກ່ຽວຂ້ອງຂອງແຂວງ, ນະຄອນຫຼວງ ເປັນຜູ້ພິຈາລະນາຮັບຮອງ;
- ໂຄງການທີ່ບໍ່ຢູ່ໃນຂອບເຂດສິດອະນຸຍາດຂອງຂັ້ນແຂວງ ແມ່ນໃຫ້ແຂວງ, ນະຄອນຫຼວງ ນຳສົ່ງຜົນຂອງການສຶກສາສຳຫຼວດຂອງໂຄງການດັ່ງກ່າວໃຫ້ຂະແໜງການກ່ຽວຂ້ອງຂັ້ນສູນກາງພິຈາລະນະຮັບຮອງແລ້ວສົ່ງໃຫ້ຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງ ນຳສະເໜີຕໍ່ ຄລທ.ສ ພິຈາລະນາອະນຸຍາດ.

**ມາດຕາ 7 ປະເພດກິດຈະການທີ່ບໍ່ອະນຸຍາດໃຫ້ທ້ອງຖິ່ນ ຄົ້ນຄ້ວາພິຈາລະນາ**

1. ກິດຈະການເກມກາຊີໂນ;
2. ກິດຈະການການເງິນ;
3. ກິດຈະການພັດທະນາເຂດເສດຖະກິດພິເສດ;
4. ກິດຈະການຮູບແບບການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ (PPP);
5. ກິດຈະການໂທລະຄົມມະນາຄົມ.

## ໝວດທີ 3
## ບົດບັນຍັດສຸດທ້າຍ

**ມາດຕາ 8 ການຈັດຕັ້ງປະຕິບັດ**

ມອບໃຫ້ປະທານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄ້ອງການລົງທຶນຂັ້ນແຂວງ, ນະຄອນຫຼວງ ເປັນໃຈກາງ ແລະ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດ, ເຜີຍແຜ່, ແນະນຳ, ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 9 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ປະທານ

ປະທານ

**ສອນໄຊ ສີພັນດອນ**